ກຳມະບານທຸລະກິດ ທຄຕລ ມອບເຄື່ອງຊ່ວຍເຫຼືອໂຮງຮຽນຂັ້ນປະຖົມຢູ່ ແຂວງໄຊສົມບຸນ



ເພື່ອເປັນການສ້າງຂະບວນການຕ້ອນຮັບວັນສ້າງຕັ້ງກຳມະບານລາວ ຄົບຮອບ 62 ປີ (1/2/1956-1/2/2018) ເວົ້າລວມ, ເວົ້າສະເພາະແມ່ນ ເພື່ອສ້າງຂະບວນການຕ້ອນຮັບຕ້ອນກອງປະຊຸມໃຫຍ່ກຳມະບານ ທຸລະກິດ ທຄຕລ ທີ່ຈະມາເຖິງນີ້, ກຳມະບານທຸລະກິດ ທຄຕລ ໄດ້ຈັດພິທີມອບຕຳລາຮຽນ, ອຸປະກອນການສຶກສາ ແລະ ເສື້ອກັນໜາວໃຫ້ໂຮງຮຽນປະຖົມສົມບຸນ ບ້ານ ອ່າວເໜືອ ແລະ ບ້ານ ອ່າວໃຕ້ ເມືອງອານຸວົງ, ແຂວງໄຊສົມບຸນ ຂຶ້ນຢ່າງເປັນທາງການໃນວັນທີ **11/01/2018** ໂດຍໃຫ້ກຽດເຂົ້າຮ່ວມເປັນປະທານຂອງ **ທ່ານ ດີວຊົ່ງ ເລ່ຍໂກ** ຮອງເລຂາພັກເມືອງ - ຮອງເຈົ້າເມືອງໆອານຸວົງ ແຂວງໄຊສົມບຸນ ແລະ **ທ່ານ ພັນຊະນະ ຄຸນນຸວົງ** ຄະນະພັກທຸລະກິດ, ຮອງຜູ້ອຳນວຍການໃຫຍ່, ຜູ້ຊີ້ນຳວຽກງານ 3 ອົງການຈັດຕັ້ງມະຫາຊົນ ທຄຕລ. ນອກນັ້ນກໍ່ຍັງມີ ຄູອາຈານ ແລະ ນ້ອງນ້ອຍນັກຮຽນຈາກສອງໂຮງຮຽນເຂົ້າຮ່ວມຢ່າງພ້ອມພຽງ. ສ່ວນຕາງໜ້າໃຫ້ ທຄຕລ ປະກອບມີ: ສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ຈາກສຳນັກງານໃຫຍ່ (ລວມທັງໜ່ວຍບໍລິການໄຊສົມບຸນ), ສາຂານະຄອນຫຼວງວຽງຈັນ, ສາຂາດົງໂດກ ເຂົ້າຮ່ວມທັງໝົດຫຼາຍກວ່າ 300 ກວ່າຄົນ.

ການມອບຮັບເຄື່ອງໃນຄັ້ງນີ້ໄດ້ຈັດຂຶ້ນຢູ່ສອງໂຮງຮຽນຄື: 1. ໂຮງຮຽນປະຖົມສົມບຸນ ບ້ານ ອ່າວເໜືອ ຕັ້ງຢູ່ຫ່າງຈາກຕົວເມືອງເທດສະບານແຂວງ 24 ກິໂລແມັດ, ປະກອບມີນັກຮຽນທັງໝົດ 208 ຄົນ. 2. ໂຮງຮຽນປະຖົມສົມບຸນ ບ້ານ ອ່າວໃຕ້ ຕັ້ງຢູ່ຫ່າງຈາກຕົວເມືອງເທດສະບານແຂວງ 37 ກິໂລແມັດ, ປະກອບມີນັກຮຽນລວມທັງໝົດ 166 ຄົນ ລວມນ້ອງນ້ອຍນັກຮຽນທັງສອງບ້ານມີ 374 ຄົນ. ໂຮງຮຽນທັງສອງແຫ່ງແມ່ນຕັ້ງຢູ່ເຂດຫ່າງໄກສອກຫຼີກ ແລະ ຍັງຖືເປັນໂຮງຮຽນທີ່ນອນຢູ່ໃນຈຳນວນບ້ານ ທີ່ທຸກຍາກຂອງເມືອງອານຸວົງ ແຂວງໄຊສົມບຸນ. ເຄື່ອງທີ່ນຳໄປມອບໃນຄັ້ງນີ້ ປະກອບມີ: ເສື້ອກັນໜາວຈຳນວນ 374 ຜືນ, ອຸປະກອນການສຶກສາ (ປຶ້ມຂຽນ 400 ຫົວ, ບິກ + ສໍ 20 ກັບ, ແຜ່ນທີ່ ແລະ ໜ່ວຍໂລກຈຳລອງຈຳນວນໜຶ່ງ), ຕຳລາຮຽນ ຈຳນວນ 30 ຊຸດ ແລະ ອຸປະກອນກິລາ ແລະ ເຄື່ອງອື່ນໆ ລວມມູນຄ່າທັງໝົດ **20.000.000 ກີບ (ຊາວລ້ານກີບ)**, ເພື່ອມອບໃຫ້ທາງໂຮງຮຽນໄດ້ນຳໃຊ້ເຂົ້າໃນການສິດສອນ, ໃຫ້ນ້ອງນ້ອຍນັກຮຽນມີຮ່າງກາຍອົບອຸ່ນໃນຊ່ວງໜ້າໜາວ ແລະ ນຳໃຊ້ອຸປະກອນຕ່າງໆເຂົ້າໃນການຮ່ຳຮຽນ ທັງເປັນການແບ່ງເບົາພາລະໃຫ້ພໍ່ແມ່ຜູ້ປົກຄອງໄດ້ໃນລະດັບໜຶ່ງ.

ຕໍ່ກັບການຊ່ວຍເຫຼືອໃນຄັ້ງນີ້ ກຳມະບານທຸລະກິດ ທຄຕລ ພາຍໃຕ້ການຊີ້ນຳຂອງຄະນະພັກທຸລະກິດ ທຄຕລ ເວລາໃດກໍ່ເຫັນໄດ້ເຖິງຄວາມສຳຄັນຕໍ່ການພັດທະນາຊັບພະຍາກອນມະນຸດ, ຍາມໃດກໍ່ຍຶດໝັ້ນຈັດຕັ້ງປະຕິບັດຄຳຂວັນ "ເດັກໃນວັນນີ້ ຄືຜູ້ໃຫຍ່ໃນວັນໜ້າ", ເຫັນໄດ້ເຖິງຄວາມສຳຄັນຂອງວຽກງານການສຶກສາ ຕາມແນວທາງທີ່ ພັກ - ລັດ ໄດ້ມອບໝາຍໃຫ້, ເພື່ອໃຫ້ນ້ອງນ້ອຍນັກຮຽນຜູ້ຢູ່ຫ່າງໄກສອກຫຼີກໄດ້ມີກຳລັງໃຈໃນການຮ່ຳຮຽນ ແລະ ພັດທະນາຕົນເອງ. ທັງນີ້ກໍ່ເພື່ອເປັນການປະກອບສ່ວນສ້າງຈິດສຳນຶກອັນດີງາມໃນການເປັນຕົວແທນຂອງຊາວຜູ້ອອກແຮງງານເວົ້າລວມ, ເວົ້າສະເພາະແມ່ນສ້າງຈິດສຳນຶກອັນດີງາມໃຫ້ພະນັກງານ ທຄຕລ ມີສ່ວນຮ່ວມໃນການຊຸກຍູ້ ຊ່ວຍເຫລືອຊຶ່ງກັນ ແລະ ກັນບໍ່ພຽງພາຍໃນ ທຄຕລ ແຕ່ຫາກເປັນການຊ່ວຍເຫລືອປະຊາຊົນໃນບັນດາເຜົ່າ ເພື່ອໃຫ້ຫລຸດພົ້ນຈາກຄວາມທຸກຍາກ ຕາມແນວທາງນະໂຍບາຍຂອງພັກວາງອອກ.

ຂຽນໂດຍ: ສົມບຸນ ສຸລິວັນ








ມອບໃຫ້
ຄະນະຮັບ
ມູນຄ່າ: 20.000.000 ກີບ




ມອບໃຫ້
ມູນຄ່າ: 20.000.000 ກີບ



